ຂ່າວ NEWS
BANK OF THE LAO PDR
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ທ່ານ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຕ້ອນຮັບຄະນະຈາກ ທະນາຄານ ກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ ) ສຳນັກງານໃຫຍ່



ໃນວັນທີ 24 ພຶດສະພາ 2023, ທີ່ຫ້ອງຮັບແຂກຂອງ ທະນາຄານແຫ່ງ ສປປ ລາວ (ທຫລ), ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ, ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະກົມພາຍໃນ ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບທ່ານ Satoshi Ogasawara, ຫົວໜ້າກຸ່ມງານວາງແຜນທຸລະກິດອົງກອນຈາກ ທະນາຄານ ກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ ) ສຳນັກງານໃຫຍ່ ພ້ອມດ້ວຍຄະນະຈາກ ທະນາຄານ ກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ) ສາຂາ ປະຈຳນະຄອນຫຼວງວຽງຈັນ ເນື່ອງໃນໂອກາດທີ່ຄະນະມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ.

ໃນໂອກາດນີ້, ທ່ານຮອງຜູ້ວ່າການກໍໄດ້ສະແດງຄວາມຊົມເຊີຍຕໍ່ກັບການດຳເນີນງານຂອງທະນາຄານດັ່ງກ່າວ ແລະ ໄດ້ແນະນຳໃຫ້ປະສານສົມທົບ ແລະ ແລກປ່ຽນບົດຮຽນນຳກັນກັບບັນດາທະນາຄານທຸລະກິດຕ່າງໆຢູ່ ສປປ ລາວ ດ້ວຍການຈັດກອງປະຊຸມສຳມະນາໃນຫົວຂໍ້ທີ່ພວມມີຄວາມຮຽກຮ້ອງຕ້ອງການໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມໃນເງື່ອນໄຂປັດຈຸບັນ ເຊັ່ນ: ການປ່ອຍສິນເຊື່ອຮ່ວມກັນຂອງຫຼາຍທະນາຄານ (Syndicated Loans), ການຄຸ້ມຄອງຄວາມສ່ຽງ ແລະ ອື່ນໆ.

ນອກຈາກນີ້, ທ່ານ ຮອງຜູ້ວ່າການ ທຫລ ກໍໄດ້ສະໜັບສະໜູນໃຫ້ ທະນາຄານກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ) ສາຂາ ປະຈຳນະຄອນຫຼວງວຽງຈັນ ສືບຕໍ່ປະກອບສ່ວນພັດທະນາການບໍລິການຂອງຕົນ ເພື່ອຮັບໃຊ້ສັງຄົມຕາມຄຳຂວັນຂອງຕົນ “Make Life Simple” ໄປຄຽງຄູ່ກັບຄວາມປອດໄພ ແລະ ຮັບປະກັນຜົນປະໂຫຍດຂອງຜູ້ຊົມໃຊ້ບໍລິການ ແນ່ໃສ່ປະກອບສ່ວນຢ່າງມີປະສິດທິພາບເຂົ້າໃນການພັດທະນາເສດຖະກິດຂອງ ສປປ ລາວ.

ຂ່າວ: ກົມຮ່ວມມືສາກົນ

ພາບ: ທິດສະບາ ທຳມະວົງສິງ

## ເສດຖະກິດລາວຈະເຂັ້ມແຂງຖ້າປວງຊົນລາວຮ່ວມແຮງນຳໃຊ້ເງິນກີບ